**ມິຊຊາອາທິດທີ 3 ກຳມົດທຳມະດາ**

**ວັນທີ 23 ມັງກອນ 2022**



**ພຣະວໍລະສານໂດຍນັກບຸນລູກາ**

ຍ້ອນວ່າມີຫລາຍຄົນໄດ້ພະຍາຍາມລຽບລຽງເຫດການທີ່ເກີດຂຶ້ນມາຢູ່ກາງພວກເຮົາ, ຕາມຜູ້ທີ່ໄດ້ຮູ້ເຫັນເປັນພະຍານດ້ວຍຕາແຕ່ຕົ້ນມາ ແລະໄດ້ເປັນຜູ້ປະກາດພຣະວາຈານັ້ນເລົ່າໃຫ້ຟັງ. ເທໂອຟີໂລທີ່ນັບຖື! ຂ້າພະເຈົ້າເຫັນວ່າເປັນການດີທີ່ຈະຮວບຮວມເລື່ອງເຫລົ່ານີ້ໄວ້ໃຫ້ທ່ານຕາມລຳດັບ. ເພື່ອໃຫ້ທ່ານຮູ້ດີວ່າ: ຄຳສອນທີ່ທ່ານໄດ້ຮັບນັ້ນມີຮາກຖານແໜ້ນໜາສັກເທົ່າໃດ.

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດກັບມາແຂວງຄາລີເລພຽບພ້ອມດ້ວຍພຣະຣິດທານຸພາບຂອງພຣະຈິດ, ແລະຊື່ສຽງຂອງພຣະອົງກໍຊ່າລືໄປທົ່ວເຂດແຂວງ. ພຣະອົງໄດ້ເທດສອນຢູ່ໃນໂຮງທຳຕ່າງໆຂອງພວກເຂົາ, ແລະທຸກຄົນກໍຍົກຍ້ອງສັນຣະເສີນພຣະອົງ. ພຣະອົງໄດ້ສະເດັດຫລົບມາທີ່ນາຊາແຣັດບ່ອນພຣະອົງໄດ້ຮັບການລ້ຽງດູຈົນໃຫຍ່. ເຖິງວັນພຣະພຣະອົງກໍສະເດັດເຂົ້າໃນໂຮງທຳຕາມເຄີຍ ແລະຊົງຢືນຂຶ້ນອ່ານພຣະຄຳພີ. ເຂົາເອົາໜັງສືຂອງປະພາສົກອີຊາຢາຍື່ນຖະຫວາຍພຣະອົງ. ພຣະອົງເປີດອອກຖືກກົງກັບບ່ອນທີ່ມີຂຽນໄວ້ວ່າ: “ພຣະຈິດຂອງພຣະອົງເຈົ້າສະຖິດຢູ່ເໜືອເຮົາ, ຍ້ອນວ່າພຣະອົງໄດ້ສະເຫລີມເຮົາ. ພຣະອົງໄດ້ສົ່ງເຮົາໄປປ່າວປະກາດພຣະວໍຣະສານແກ່ຄົນທຸກຈົນ, ຂ່າວການປົດປ່ອຍແກ່ພວກຖືກຄຸມຂັງ, ຊ່ອຍຄົນຕາບອດໃຫ້ເຫັນຮຸ່ງ, ຊ່ອຍພວກຖືກຂົ່ມເຫັງໃຫ້ມີເສລີ, ແລະປ່າວປະກາດປີແຫ່ງຄວາມເມດຕາ ຂອງພຣະອົງເຈົ້າ.” ແລ້ວພຣະອົງຊົງກໍ້ໜັງສືສົ່ງໃຫ້ຄົນໃຊ້ແລະປະທັບນັ່ງ. ທຸກຄົນໃນໂຮງທຳແນມເບິ່ງພຣະອົງພຣະອົງຈຶ່ງກ່າວວ່າ: “ເລື່ອງໃນພຣະຄຳພີຕອນທີ່ຫູຂອງພວກເຈົ້າໄດ້ຍິນນັ້ນ ສຳເລັດລົງແລ້ວໃນວັນນີ້ເອງ.”

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຫລັງຈາກທີ່ພຣະເຢຊູເຈົ້າໄດ້ຮັບສິນລ້າງຈາກທ່ານຢວງ, ພຣະອົງກໍສະເດັດໄປທີ່ປ່າວເປັນເວລາສີ່ສິບມື້ສີ່ສິບຄືນເພື່ອສວດມົນພາວະນາ. ວັນນີ້, ພຣະອົງໄດ້ກັບມາບ້ານເກົ່າເມືອງເດີມຂອງພຣະອົງອັນແມ່ນບ້ານນາຊາແລັດ, ແຂວງກາລີເລ.

ມີສິ່ງໜຶ່ງທີ່ໜ້າສັງເກດກໍຄື ບໍ່ວ່າພຣະເຢຊູເຈົ້າຢູ່ບ່ອນໃດພຣະຈິດເຈົ້າກໍສະຖິດຢູ່ກັບພຣະອົງ. ເຊັ່ນວ່າ: ເມື່ອເວລາພຣະອົງຮັບສິນລ້າງ, ພຣະຈິດເຈົ້າກໍສະເດັດລົງມາເໜືອພຣະອົງເປັນຮູບຄືນົກກາງແກ. ແລະເມື່ອພຣະອົງສະເດັດເຂົ້າທີ່ປ່າວ, ພຣະອົງກໍເຕັມພຽບດ້ວຍພຣະຈິດເຈົ້າ. ແລະເມື່ອພຣະອົງກັບມາບ້ານນາຊາແລັດ, ແຂວງກາລີເລ, ລິດທານຸພາບຂອງພຣະຈິດເຈົ້າກໍຢູ່ນໍາພຣະອົງ.

ແລະວັນນີ້, ຢູ່ໃນໂຮງທໍາ, ເມື່ອພຣະອົງອ່ານບົດອ່ານຈາກໜັງສືຂອງປະພາສົກອີຊາຢາກໍຖືກກັບຕອນທີ່ວ່າ: "ພຣະຈິດຂອງພຣະເຈົ້າສະຖິດຢູ່ເໜືອຂ້າພະເຈົ້າ". ນັ້ນກໍໝາຍຄວາມວ່າ ພຣະເຢຊູແມ່ນພຣະເມດຊາອາ, ອັນມີຄວາມໝາຍ: ຜູ້ທີ່ຖືກເຈີມຈາກພຣະຈິດເຈົ້າ. ແລະພາລະກິດຂອງພຣະອົງຄືປະກາດຂ່າວດີແກ່ຄົນທຸກຈົນ, ປົດປ່ອຍຄົນຖືກຄຸມຂັງ, ປິ່ນປົວຄົນຕາບອດໃຫ້ເຫັນຮຸ່ງແລະປະກາດເຖິງຄວາມຮັກ, ຄວາມເມດຕາຂອງພຣະບິດາເຈົ້າໃຫ້ມະນຸດທັງມວນ. ຫລືເວົ້າອີກຢ່າງ, ພາລະກິດຂອງພຣະເຢຊູເຈົ້າຄືປົດປ່ອຍມະນຸດອອກຈາກບາບອັນເປັນທີ່ມາຂອງຄວາມຕາຍ. ເພາະພຣະອົງແມ່ນພຣະຜູ້ກູ້ໄຖ່ຂອງພວກເຮົາ.

ພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າ, ພວກເຮົາກໍຖືກເຈີມດ້ວຍພຣະຈິດເຈົ້າເມື່ອເວລາພວກເຮົາຮັບສິນລ້າງບາບ. ພຣະຈິດເຈົ້າກໍສະຖິດຢູ່ນໍາພວກເຮົາເໝືອນກັບພຣະຈິດເຈົ້າໄດ້ສະຖິດຢູ່ກັບພຣະເຢຊູເຈົ້າ. ດ້ວຍເຫດນີ້, ໜ້າທີ່ຊຶ່ງພວກເຮົາໄດ້ຮັບຈາກພຣະຈິດເຈົ້າກໍຄືປະກາດຂ່າວດີແຫ່ງການໄຖ່ກູ້ຂອງພຣະເຢຊູເຈົ້າແລະເປັນພິຍານເຖິງຄວາມຮັກ, ຄວາມເມດຕາຂອງພຣະບິດາເຈົ້າທີ່ມີຕໍ່ພວກເຮົາຜ່ານການໃຫ້ອະໄພຂອງພຣະອົງ. ດ້ວຍເຫດນີ້, ຜູ້ທີ່ເປັນກຣິສຕັງຕ້ອງມີໜ້າທີ່ເປັນພິຍານເຖິງພຣະວໍລະສານໃນຊີວິດຂອງເຂົາ. ແຕ່ພວກເຮົາໄດ້ປະຕິບັດໜ້າທີ່ການເປັນພິຍານຂອງພວກເຮົາບໍ? ພວກເຮົາໄດ້ຮ່ວມມືກັບອົງພຣະຈິດເຈົ້າບໍ? ຫລືພວກເຮົາສົນລະວົນນໍາຊີວິດຝ່າຍໂລກຫລາຍກວ່າຊີວິດຝ່າຍຈິດ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ສໍານຶກໄດ້ເຖິງພຣະຄຸນທີ່ລູກໄດ້ຮັບຈາກພຣະຈິດເຈົ້າໃນວັນທີ່ລູກຮັບສິນລ້າງບາບ. ເພື່ອລູກຈະໄດ້ເປັນພິຍານແລະເປັນຜູ້ປະກາດເຖິງຂ່າວດີແຫ່ງການໄຖ່ກູ້ຂອງພຣະອົງສໍາລັບລູກແລະສໍາລັບມວນມະນຸດດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ